ທຄຕລ BCEL

# ປະກາດຮັບສະໝັກ ພະນັກງານຂັບລົດສັນຍາຈ້າງ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່** ມີຄວາມຕ້ອງການຮັບພະນັກງານຂັບລົດ (ສັນຍາຈ້າງ) **ຈຳນວນ 01 ຄົນ.**

❖ **<u>ເງື່ອນໄຂຜູ້ສະໝັກ:</u>**

- ✓ ເພດຊາຍ ອາຍຸແຕ່ 25- 35 ປີ.
- ✓ ຈົບມັດທະຍົມຕົ້ນຂຶ້ນໄປ
- ✓ ມີໃບອະນຸຍາດຂັບລົດ (ໃບຂັບຂີ່) ແລະ ຍັງນຳໃຊ້ໄດ້ຢູ່ຈົນເຖິງປະຈຸບັນ.
- ✓ ບໍ່ເຄີຍຕ້ອງໂທດ ຄະດີອາຍາ ຫຼື ອາດສະຍາກຳອື່ນໆ, ຕິດຄຸກ ຫຼື ກ່ຽວຂ້ອງກັບສິ່ງຜິດ ລະບຽບກົດໝາຍ.
- ✓ ເປັນຄົນທ້ອງຖິ່ນນະຄອນຫຼວງວຽງຈັນ ຫຼື ອາໄສຢູ່ນະຄອນຫຼວງວຽງຈັນ.
- ✓ ສາມາດເຮັດວຽກນອກໂມງການ ແລະ ໄປຕ່າງແຂວງໄດ້.
- ✓ ມີປະສົບການດ້ານການເຮັດວຽກງານຂັບລົດມາກ່ອນ ຍິ່ງເປັນການດີ.

❖ **<u>ຄຸນລັກສະນະຜູ້ສະໝັກ:</u>**

- ✓ ມີສຸຂະພາບແຂງແຮງ ແລະ ສາມາດຍົກເຄື່ອງໜັກໄດ້.
- ✓ ມີຄວາມຫ້າວຫັນ ແລະ ຊື່ສັດຕໍ່ໜ້າທີ່ວຽກງານ.
- ✓ ມີຄວາມຮູ້ການນຳໃຊ້ອຸປະກອນບຳລຸງຮັກສາ ແລະ ສ້ອມແປງລົດໄດ້.
- ✓ ມະນຸດສຳພັນດີ, ໃຈຮັກໃນການບໍລິການ.
- ✓ ລະອຽດຮອບຄອບ, ມີຄວາມຮັບຜິດຊອບສູງ ແລະ ກົງຕໍ່ເວລາ.
- ✓ ເຄົາລົບນັບຖືກົດລະບຽບກົດໝາຍ, ລະບຽບຈະລາຈອນຢ່າງເຄັ່ງຄັດ.

❖ **<u>ຜົນຕອບແທນ ແລະ ນະໂຍບາຍຕ່າງໆ:</u>**

- ✓ ໄດ້ຮັບເງິນເດືອນຕາມລະບຽບກົດໝາຍແຮງງານຂັ້ນຕົ້ນ.
- ✓ ເງິນແຮງງານ
- ✓ ແລະ ເງິນນະໂຍບາຍອື່ນໆ ຕາມລະບຽບຂອງ ທຄຕລ.
- ✓ ເປັນພະນັກງານສັນຍາຈ້າງ ປີ ຕໍ່ ປີ.

❖ **<u>ຂອບເຂດ ແລະ ໜ້າທີ່ຮັບຜິດຊອບ:</u>**

- ✓ ປະຕິບັດໜ້າທີ່ຂັບລົດຮັບໃຊ້ວຽກງານພາຍໃນ ທຄຕລ ສຳນັກງານໃຫຍ່ ແລະ ບັນດາໜ່ວຍບໍລິການ.
- ✓ ບຳລຸງຮັກສາລົດທີ່ຢູ່ໃນຄວາມຮັບຜິດຊອບ ຕະຫຼອດເຖິງບັນດາອຸປະກອນເຄື່ອງໃຊ້ ພາຍໃນລົດຕ່າງໆ ໃຫ້ມີຄວາມສະອາດຈົບງາມ.
- ✓ ກວດສອບສະພາບ ແລະ ຮັກສາລົດໃຫ້ພ້ອມໃຊ້ງານເປັນປະຈຳ.
- ✓ ວຽກງານອື່ນໆ ທີ່ໄດ້ຮັບມອບໝາຍ.

❖ **<u>ວິທີສະໝັກວຽກ:</u>**

1. **<u>ເປີດຂາຍ-ຮັບຟອມສະໝັກ ໃນລະຫວ່າງວັນທີ 18/05/2017-30/06/2017.</u>**
2. ສາມາດດາວໂຫຼດຟອມສະໝັກວຽກໄດ້ທີ່ເວັບໄຊສ໌ ຂອງ ທຄຕລ www.bcel.com.la ເຂົ້າໄປທີ່ສະໝັກງານ> ດາວໂຫຼດຟອມສະໝັກວຽກ ຫຼື ພິວພັນເອົາຟອມສະໝັກງານດ້ວຍຕົນເອງໄດ້ທີ່ພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່ (ແຄມຂອງ) ຕຶກ c ຊັ້ນ 04 ຫຼື ໂທສອບຖາມຂໍ້ມູນໄດ້ທີ່ **021 213200 ຕໍ່ 417 ຫຼື 418** (ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພິວພັນຮັບ-ສົ່ງເອກະສານແທນ).
3. ໃຫ້ນຳເອົາໃບຂັບຂີ່ ແລະ ບັດປະຊາຊົນ ຫຼື ສຳມະໂນຄົວ ສະບັບຕົ້ນມານຳໃນເວລາທີ່ມາພິວພັນເອົາແບບຟອມ-ສົ່ງແບບຟອມສະໝັກວຽກ.

**ຜູ້ທີ່ຜ່ານການຄັດຟອມໃນເບື້ອງຕົ້ນ ທາງ ທຄຕລ ຈະໂທຕິດຕໍ່ກັບ.**

**ນະຄອນຫຼວງວຽງຈັນ, ວັນທີ 18/05/2017**

**ຫົວໜ້າພະແນກຈັດຕັ້ງ-ພະນັກງານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພະແນກ ຈັດຕັ້ງແລະພະນັກງານ

ບຸດສະດີ ມູນລາດຊະວົງ